ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

---------------------

ແຂວງບໍລິຄໍາໄຊ

ເລກທີ 786 /ຂບຊ

ບໍລິຄໍາໄຊ, ວັນທີ 31 OCT 2018

# ຂໍ້ຕົກລົງ
## ເຈົ້າແຂວງບໍລິຄໍາໄຊ
## ວ່າດ້ວຍການມີສ່ວນຮ່ວມຂອງສັງຄົມເຂົ້າໃນວຽກງານການສຶກສາ

- **ອີງຕາມ** ກົດໝາຍວ່າດ້ວຍການສ້າງນິຕິກໍາ ສະບັບເລກທີ 19/ສພຊ, ລົງວັນທີ 17 ກຸມພາ 2012.
- **ອີງຕາມ**ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ສະບັບເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015.
- **ອີງຕາມ** ກົດໝາຍວ່າດ້ວຍການສຶກສາສະບັບປັບປຸງ ສະບັບເລກທີ 62/ສພຊ, ລົງວັນທີ 16 ກໍລະກົດ 2015.
- **ອີງຕາມ** ມະຕິກອງປະຊຸມສະພາປະຊາຊົນ ແຂວງບໍລິຄໍາໄຊ ສະບັບເລກທີ 103/ສພຊ.ຂບຊ, ລົງວັນທີ 24 ກໍລະກົດ 2017 ວ່າດ້ວຍການຮັບຮອງເອົາແຜນການສ້າງ ແລະ ປັບປຸງນິຕິກໍາໄລຍະປີ 2017-2020 ຂອງສະພາປະຊາຊົນແຂວງ ຊຸດທີ I.
- ອີງຕາມ ມະຕິຂອງກອງປະຊຸມສະພາປະຊາຊົນແຂວງບໍລິຄໍາໄຊ ເລກທີ 080/ສພຂ, ລົງ ວັນທີ 21 ກັນຍາ 2018.

ເຈົ້າແຂວງບໍລິຄໍາໄຊ ຕົກລົງ:

### ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1** ຈຸດປະສົງ

ຂໍ້ຕົກລົງສະບັບນີ້, ກໍານົດຫຼັກການ, ລະບຽບການ, ມາດຕະການກ່ຽວກັບການມີສ່ວນຮ່ວມຂອງສັງຄົມເຂົ້າໃນວຽກງານການສຶກສາ ແລະ ການຄຸ້ມຄອງນໍາໃຊ້ງົບປະມານ, ວັດຖຸອຸປະກອນທີ່ໄດ້ມາຈາກການມີສ່ວນຮ່ວມນັ້ນ ໄດ້ຖືກນໍາໃຊ້ເຂົ້າໃນການພັດທະນາວຽກງານການສຶກສາ, ສ້າງຜົນປະໂຫຍດຕໍ່ສ່ວນລວມ ເພື່ອແນໃສ່ພັດທະນາຊັບພະຍາກອນມະນຸດໃຫ້ກາຍເປັນພົນລະເມືອງດີ, ມີຄຸນສົມບັດສິນທໍາປະຕິວັດ, ມີຄວາມຮູ້, ຄວາມສາມາດ, ມີວິຊາຊີບ, ມີຄວາມຊໍານານງານ, ມີສຸຂະພາບພະລະນາໄມສົມບູນແຂງແຮງ, ຮູ້ຮັກສາ, ສົ່ງເສີມສິລະປະວັດທະນະທໍາ, ຮີດຄອງປະເພນີອັນດີງາມຂອງຊາດ ສາມາດເຊື່ອມໂຍງເຂົ້າກັບພາກພື້ນ, ສາກົນປະກອບ ສ່ວນເຂົ້າໃນການສ້າງສາພັດທະນາປະເທດຊາດ.

**ມາດຕາ 2** ການມີສ່ວນຮ່ວມຂອງສັງຄົມເຂົ້າໃນວຽກງານການສຶກສາ

ການມີສ່ວນຮ່ວມຂອງສັງຄົມເຂົ້າໃນວຽກງານການສຶກສາ ແມ່ນການປະກອບສ່ວນຂອງຄອບຄົວ, ບຸກຄົນ, ນິຕິບຸກຄົນ ແລະ ທຸກພາກສ່ວນຂອງສັງຄົມດ້ວຍຫຼາຍຮູບການເຂົ້າໃນວຽກງານການສຶກສາ ເປັນເງິນ, ວັດຖຸ, ອຸປະກອນ, ສະຕິປັນຍາ, ກໍາລັງແຮງ ແລະ ອື່ນໆ.

**ມາດຕາ 3** ອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ເຂົ້າໃນຂໍ້ຕົກລົງສະບັບນີ້ມີຄວາມໝາຍດັ່ງນີ້:

1. **ການມີສ່ວນຮ່ວມ** ໝາຍເຖິງການປະກອບສ່ວນຂອງທຸກພາກສ່ວນໃນສັງຄົມຕໍ່ວຽກງານໃດໜຶ່ງ.
2. **ບຸກຄະລາກອນການສຶກສາ** ໝາຍເຖິງຜູ້ເຮັດໜ້າທີ່ຄຸ້ມຄອງ, ບໍລິຫານ, ກວດກາ, ແນະນຳ, ຊ່ວຍເຫຼືອ ແລະ ອຳນວຍຄວາມສະດວກໃຫ້ແກ່ການຮຽນ - ການສອນ ຢູ່ສະຖານການສຶກສາທັງພາກລັດ ແລະ ເອກະຊົນ.
3. **ຄະນະກຳມະການຄຸ້ມຄອງການສຶກສາ** ໝາຍເຖິງການຈັດຕັ້ງໜຶ່ງທີ່ມີຄວາມຮັບຜິດຊອບໃນຄະນະກຳມະການຄຸ້ມຄອງທັງໃນ ແລະ ນອກໂຮງຮຽນ ເພື່ອຊຸກຍູ້, ສົ່ງເສີມ ແລະ ອຳນວຍຄວາມສະດວກ ໃຫ້ທຸກຄົນໄດ້ຮັບການສຶກສາຢ່າງທົ່ວເຖິງ ເຊິ່ງປະກອບດ້ວຍບຸກຄະລາກອນຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງ.
4. **ບຸກຄົນ** ໝາຍເຖິງ ແຕ່ລະຄົນ, ສ່ວນໂຕຄົນ.
5. **ນິຕິບຸກຄົນ** ໝາຍເຖິງອົງການ, ບຸກຄົນ ທີ່ກົດໝາຍບັນຍັດໃຫ້ມີສິດ ແລະ ໜ້າທີ່.
6. **ຜົນງານດີເດັ່ນ** ໝາຍເຖິງການປະກອບສ່ວນສິ່ງໃດໜຶ່ງທີ່ຫຼາຍ ແລະ ພົ້ນເດັ່ນກວ່າໝູ່
7. **ວຽກງານການສຶກສາ** ໝາຍເຖິງຂະບວນການສອນ, ການຮຽນຮູ້ທາງດ້ານທິດສະດີ ແລະ ພຶດຕິກຳຕົວຈິງກ່ຽວກັບວິທະຍາສາດທຳມະຊາດ, ວິທະຍາສາດສັງຄົມ ແລະ ເຕັກໂນໂລຊີ ເພື່ອພັດທະນາຊັບພະຍາກອນມະນຸດໃຫ້ຂະຫຍາຍຕົວຢ່າງຮອບດ້ານ.

**ມາດຕາ 4** ນະໂຍບາຍຂອງລັດຕໍ່ກັບການມີສ່ວນຮ່ວມຂອງສັງຄົມໃນວຽກງານການສຶກສາ

ລັດ ຖືເອົາການມີສ່ວນຮ່ວມຂອງສັງຄົມດ້ວຍການຊຸກຍູ້ສົ່ງເສີມ, ປຸກລະດົມ ແລະ ສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ນິຕິບຸກຄົນ ແລະ ທຸກພາກສ່ວນໃນສັງຄົມນັບທັງພາຍໃນ ແລະ ຕ່າງປະເທດປະກອບສ່ວນ ທຶນຮອນ, ວັດຖຸ, ອຸປະກອນ, ກຳລັງແຮງ ແລະ ສະຕິປັນຍາ ເຂົ້າໃນການພັດທະນາວຽກງານການສຶກສາ;

ລັດມີນະໂຍບາຍຍ້ອງຍໍ, ຊົມເຊີຍ, ບຸກຄົນ, ນິຕິບຸກຄົນ ແລະ ທຸກພາກສ່ວນໃນສັງຄົມຢ່າງເໝາະສົມ ທີ່ປະກອບສ່ວນເຂົ້າໃນວຽກງານການສຶກສາຕາມກົດໝາຍ ແລະ ລະບຽບການທີ່ກຳນົດໄວ້.

**ມາດຕາ 5** ຫຼັກການ ການມີສ່ວນຮ່ວມຂອງສັງຄົມເຂົ້າໃນວຽກງານການສຶກສາ ມີຫຼັກການດັ່ງນີ້:

1. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດແຜນພັດທະນາການສຶກສາແຫ່ງຊາດ, ກົດໝາຍ ແລະ ລະບຽບການ;
2. ສະໝັກໃຈຕາມຄວາມສາມາດຂອງບຸກຄົນ, ນິຕິບຸກຄົນ ແລະ ທຸກການຈັດຕັ້ງສັງຄົມ.
3. ປະຕິບັດພັນທະຕໍ່ວຽກງານການສຶກສາ;
4. ມີຄວາມເປັນເອກະພາບປະຕິບັດຕາມສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ;
5. ເປີດເຜີຍ, ໂປ່ງໃສ ແລະ ກວດສອບໄດ້.

**ມາດຕາ 6** ຂອບເຂດການນຳໃຊ້ຂໍ້ຕົກລົງ

ຂໍ້ຕົກລົງສະບັບນີ້ນຳໃຊ້ສະເພາະບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງສັງຄົມທຸກພາກສ່ວນທັງພາຍໃນ ແລະ ຕ່າງປະເທດທີ່ປະກອບສ່ວນເຂົ້າໃນວຽກງານການສຶກສາຂອງລັດທີ່ເຄື່ອນໄຫວຢູ່ພາຍໃນແຂວງ ບໍລິຄຳໄຊ.

## ໝວດທີ 2
## ການມີສ່ວນຮ່ວມຂອງສັງຄົມເຂົ້າໃນວຽກງານການສຶກສາ ແລະ ການນຳໃຊ້ເງິນ

**ມາດຕາ 7** ການມີສ່ວນຮ່ວມຂອງສັງຄົມເຂົ້າໃນວຽກງານການສຶກສາ ມີ:

1. ການປະກອບສ່ວນຕາມກົດໝາຍ ແລະ ລະບຽບການ;
2. ການປະກອບສ່ວນເປັນພັນທະ;
3. ການປະກອບສ່ວນຕາມຄວາມສະໝັກໃຈເປັນເງິນ ຫຼື ວັດຖຸ.

**ມາດຕາ 8**  ການປະກອບສ່ວນຕາມກົດໝາຍ ແລະ ລະບຽບການ

ແມ່ນການປະກອບສ່ວນຄ່າບໍລິການຂອງຂະແໜງການສຶກສາຕາມລັດຖະບັນຍັດ ເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການ ມີ:

| | | | | |
|---|---|---|---|---|
| 1. | ຄ່າລົງທະບຽນເຂົ້າຮຽນປະຈຳປີ | ຊັ້ນ ມ.ປາຍ | 15.000 | ກີບ ຕໍ່ຄົນຕໍ່ປີ |
| 2. | ຄ່າບຳລຸງຮັກສາປຶ້ມແບບຮຽນ | ຊັ້ນ ມ.ຕົ້ນ | 1.500 | ກີບ ຕໍ່ຄົນຕໍ່ປີ |
| | | ຊັ້ນ ມ.ປາຍ | 2.000 | ກີບ ຕໍ່ຄົນຕໍ່ປີ |
| 3. | ຄ່າສອບເສັງພາກຮຽນ | ຊັ້ນ ມ.ປາຍ | 5.000 | ກີບ ຕໍ່ຄົນຕໍ່ປີ |
| 4. | ຄ່າສອບເສັງເລື່ອນຊັ້ນ | ຊັ້ນ ມ.ປາຍ | 5.000 | ກີບ ຕໍ່ຄົນຕໍ່ປີ |
| 5. | ຄ່າສອບເສັງຈົບຊັ້ນ | ມ.ປາຍ | 20.000 | ກີບ ຕໍ່ຄົນຕໍ່ປີ |
| 6. | ຄ່າບັດເຂົ້າຫ້ອງສອບເສັງຈົບຊັ້ນ | ມ.ປາຍ | 3.000 | ກີບ ຕໍ່ໃບ |
| 7. | ຄ່າປຶ້ມຕິດຕາມການຮຽນ | ຊັ້ນ ມ.ປາຍ | 5.000 | ກີບ ຕໍ່ຫົວ |

( ຊັ້ນອະນຸບານ, ຊັ້ນປະຖົມ ແລະ ຊັ້ນມັດທະຍົມຕົ້ນ ເຊິ່ງເປັນການສຶກສາພາກບັງຄັບບໍ່ໄດ້ເສຍຄ່າຕາມລັດຖະບັນຍັດ ເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການຂອງຂະແໜງການສຶກສາ )

**ມາດຕາ 9**  ການປະກອບສ່ວນເປັນພັນທະ

ແມ່ນການປະກອບສ່ວນຂອງຄອບຄົວພໍ່ແມ່ຜູ້ປົກຄອງນັກຮຽນໃນການຊ່ວຍດ້ານງົບປະມານຂອງໂຮງຮຽນທີ່ລັດສະໜອງໃຫ້ບໍ່ທັນພຽງພໍຕາມຄວາມຈຳເປັນ. ດັ່ງນັ້ນ, ນັກຮຽນທີ່ເຂົ້າຮຽນໃນແຕ່ລະຊັ້ນຂອງໂຮງຮຽນຕ່າງໆ ພາຍໃນແຂວງບໍລິຄຳໄຊ ຈຶ່ງມີຄວາມຈຳເປັນຕ້ອງປະກອບສ່ວນເປັນພັນທະຕໍ່ວຽກງານສຶກສາສູງສຸດບໍ່ໃຫ້ເກີນຈຳນວນຕົວເລກເງິນລຸ່ມນີ້:

**I.** ເມືອງປາກຊັນ, ທ່າພະບາດ, ປາກກະດິງ ແລະ ຄຳເກີດ:

ໂຮງຮຽນໃນຕົວເມືອງ:

| | | |
|---|---|---|
| ຊັ້ນອະນຸບານ: | 50.000 | ກີບ ຕໍ່ຄົນຕໍ່ປີ |
| ຊັ້ນປະຖົມ: | 80.000 | ກີບ ຕໍ່ຄົນຕໍ່ປີ |
| ຊັ້ນມັດທະຍົມຕົ້ນ: | 100.000 | ກີບ ຕໍ່ຄົນຕໍ່ປີ |
| ຊັ້ນມັດທະຍົມປາຍ: | 150.000 | ກີບ ຕໍ່ຄົນຕໍ່ປີ |

ໂຮງຮຽນນອກຕົວເມືອງ:

| | | |
|---|---|---|
| ຊັ້ນອະນຸບານ: | 30.000 | ກີບ ຕໍ່ຄົນຕໍ່ປີ |
| ຊັ້ນປະຖົມ: | 70.000 | ກີບ ຕໍ່ຄົນຕໍ່ປີ |
| ຊັ້ນມັດທະຍົມຕົ້ນ: | 80.000 | ກີບ ຕໍ່ຄົນຕໍ່ປີ |
| ຊັ້ນມັດທະຍົມປາຍ: | 120.000 | ກີບ ຕໍ່ຄົນຕໍ່ປີ |

**II.** ເມືອງບໍລິຄັນ:

ໂຮງຮຽນໃນຕົວເມືອງ:

| | | |
|---|---|---|
| ຊັ້ນອະນຸບານ: | 20.000 | ກີບ ຕໍ່ຄົນຕໍ່ປີ |
| ຊັ້ນປະຖົມ: | 50.000 | ກີບ ຕໍ່ຄົນຕໍ່ປີ |
| ຊັ້ນມັດທະຍົມຕົ້ນ: | 100.000 | ກີບ ຕໍ່ຄົນຕໍ່ປີ |
| ຊັ້ນມັດທະຍົມປາຍ: | 150.000 | ກີບ ຕໍ່ຄົນຕໍ່ປີ |

ໂຮງຮຽນນອກຕົວເມືອງ:

| | | |
|---|---|---|
| ຊັ້ນອະນຸບານ: | 20.000 | ກີບ ຕໍ່ຄົນຕໍ່ປີ |
| ຊັ້ນປະຖົມ: | 30.000 | ກີບ ຕໍ່ຄົນຕໍ່ປີ |

ຊັ້ນມັດທະຍົມຕົ້ນ: 80.000 ກີບ ຕໍ່ຄົນຕໍ່ປີ
ຊັ້ນມັດທະຍົມປາຍ: 120.000 ກີບ ຕໍ່ຄົນຕໍ່ປີ

**III.** ເມືອງວຽງທອງ:

ໂຮງຮຽນໃນຕົວເມືອງ:
ຊັ້ນອະນຸບານ: 20.000 ກີບ ຕໍ່ຄົນຕໍ່ປີ
ຊັ້ນປະຖົມ: 50.000 ກີບ ຕໍ່ຄົນຕໍ່ປີ
ຊັ້ນມັດທະຍົມຕົ້ນ: 80.000 ກີບ ຕໍ່ຄົນຕໍ່ປີ
ຊັ້ນມັດທະຍົມປາຍ: 120.000 ກີບ ຕໍ່ຄົນຕໍ່ປີ

ໂຮງຮຽນນອກຕົວເມືອງ:
ຊັ້ນອະນຸບານ: 10.000 ກີບ ຕໍ່ຄົນຕໍ່ປີ
ຊັ້ນປະຖົມ: 30.000 ກີບ ຕໍ່ຄົນຕໍ່ປີ
ຊັ້ນມັດທະຍົມຕົ້ນ: 70.000 ກີບ ຕໍ່ຄົນຕໍ່ປີ
ຊັ້ນມັດທະຍົມປາຍ: 100.000 ກີບ ຕໍ່ຄົນຕໍ່ປີ

**IV.** ເມືອງໄຊຈໍາພອນ:

ໂຮງຮຽນໃນຕົວເມືອງ:
ຊັ້ນອະນຸບານ: 10.000 ກີບ ຕໍ່ຄົນຕໍ່ປີ
ຊັ້ນປະຖົມ: 20.000 ກີບ ຕໍ່ຄົນຕໍ່ປີ
ຊັ້ນມັດທະຍົມຕົ້ນ: 70.000 ກີບ ຕໍ່ຄົນຕໍ່ປີ
ຊັ້ນມັດທະຍົມປາຍ: 90.000 ກີບ ຕໍ່ຄົນຕໍ່ປີ

ໂຮງຮຽນນອກຕົວເມືອງ:
ຊັ້ນອະນຸບານ: 5.000 ກີບ ຕໍ່ຄົນຕໍ່ປີ
ຊັ້ນປະຖົມ: 10.000 ກີບ ຕໍ່ຄົນຕໍ່ປີ
ຊັ້ນມັດທະຍົມຕົ້ນ: 50.000 ກີບ ຕໍ່ຄົນຕໍ່ປີ
ຊັ້ນມັດທະຍົມປາຍ: 80.000 ກີບ ຕໍ່ຄົນຕໍ່ປີ

( ສໍາລັບການກໍານົດເຂດໂຮງຮຽນໃນຕົວເມືອງ ແລະ ນອກຕົວເມືອງ ໃຫ້ອໍານາດການປົກຄອງເມືອງສົມທົບກັບຄະນະກໍາມະການຄຸ້ມຄອງການສຶກສາຂັ້ນເມືອງ ກໍານົດຕາມຄວາມເໝາະສົມ )

**ມາດຕາ 10 ການປະກອບສ່ວນຕາມຄວາມສະໝັກໃຈ**

ແມ່ນການປະກອບສ່ວນຂອງຄອບຄົວ, ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນທັງພາຍໃນ ແລະ ຕ່າງປະເທດ ຕາມຈຸດປະສົງ ແລະ ຄວາມສາມາດຂອງຕົນ ໃນການມີສ່ວນຮ່ວມເຂົ້າໃນວຽກງານການສຶກສາ ທາງດ້ານງົບປະມານເປັນເງິນ, ວັດຖຸ, ອຸປະກອນ, ພາຫະນະ, ສະຕິປັນຍາ, ກໍາລັງແຮງເຊັ່ນ: ການພັດທະນາພື້ນຖານໂຄງລ່າງຂອງໂຮງຮຽນ, ອຸປະກອນການຮຽນ-ການສອນ, ການສ້າງກິດຈະກໍາຕ່າງໆໃນໂຮງຮຽນ, ການສົ່ງເສີມມູນເຊື້ອວັດທະນະທໍາຮີດຄອງປະເພນີ, ປຸກຈິດສໍານຶກທີ່ດີໃຫ້ນັກຮຽນ ແລະ ອື່ນໆ ທີ່ບໍ່ຂັດກັບກົດໝາຍ ແລະ ລະບຽບຂອງໂຮງຮຽນ ຫຼື ຄະນະຄຸ້ມຄອງການສຶກສາແຕ່ລະຂັ້ນ.

**ມາດຕາ 11 ກໍານົດເວລາການປະກອບສ່ວນພັນທະ**

ການປະກອບສ່ວນເປັນພັນທະຂອງສັງຄົມ, ພໍ່ແມ່ຜູ້ປົກຄອງນັກຮຽນ ແມ່ນປະຕິບັດໃນເວລາລົງທະບຽນເຂົ້າຮຽນໃນແຕ່ລະປີຂອງທຸກໂຮງຮຽນໃນເດືອນ ສິງຫາ ( 8 ) ຂອງທຸກໆປີ.

**ມາດຕາ 12 ກໍລະນີຍົກເວັ້ນການປະຕິບັດພັນທະຂອງນັກຮຽນ**

ຄອບຄົວອະນາຖາ, ຄອບຄົວທີ່ບໍ່ທັນພົ້ນທຸກ ໂດຍມີໃບຢັ້ງຢືນຈາກອົງການປົກຄອງບ້ານ;

ຄອບຄົວທີ່ປະສົບໄພທຳມະຊາດ, ຄອບຄົວຖືກອັກຄີໄພ ທີ່ສູນເສຍຊັບສິນຫຼາຍຄາດຄະເນ 80 % ຂຶ້ນໄປ ( ຍົກເວັ້ນແຕ່ປີທີ່ຖືກປະສົບໄພເທົ່ານັ້ນ ) ໂດຍມີໃບຢັ້ງຢືນຈາກອົງການປົກຄອງບ້ານ.

**ມາດຕາ 13** ການນຳໃຊ້ເງິນ

ສຳລັບການນຳໃຊ້ເງິນຕາມລັດຖະບັນຍັດ ເລກທີ 003/ປປທ ແມ່ນປະຕິບັດດັ່ງນີ້:

1. ຄ່າທຳນຽມທີ່ເກັບຕາມລັດຖະບັນຍັດ ເລກທີ 003/ປປທ, ລົງວັນທີ 26 ທັນວາ 2012 ວ່າດ້ວຍຄ່າທຳນຽມ ແມ່ນມອບເຂົ້າງົບປະມານຂອງລັດ ຕາມລະບຽບການ;

2. ສຳລັບຄ່າບໍລິການ ເວລານຳໃຊ້ແມ່ນໃຫ້ຂະແໜງສຶກສາແຕ່ລະຂັ້ນສ້າງແຜນລາຍຮັບ, ລາຍຈ່າຍ ໂດຍຜ່ານຂະແໜງການເງິນແຕ່ລະຂັ້ນ ເພື່ອສັງລວມແລ້ວສະເໜີຂັ້ນເທິງພິຈາລະນາ;

3. ສຳລັບການນຳໃຊ້ເງິນທີ່ປະກອບສ່ວນເປັນພັນທະ ແມ່ນມອບໃຫ້ຂະແໜງສຶກສາແຕ່ລະຂັ້ນສ້າງແຜນລາຍຮັບ, ລາຍຈ່າຍ ໂດຍຜ່ານຂະແໜງການເງິນແຕ່ລະຂັ້ນ ເພື່ອສັງລວມແລ້ວສະເໜີຂັ້ນເທິງພິຈາລະນາ.

4. ການປະກອບສ່ວນຕາມຄວາມສະໝັກໃຈ ແມ່ນມອບໃຫ້ຄະນະກຳມະການຄຸ້ມຄອງການສຶກສາຂັ້ນບ້ານ ສົມທົບກັບຄະນະອຳນວຍການໂຮງຮຽນສັງລວມສ້າງບັນຊີລາຍຮັບ-ລາຍຈ່າຍເປີດເຜີຍຕໍ່ສັງຄົມ ແລະ ລາຍງານການຈັດຕັ້ງຂັ້ນເທິງຕາມລຳດັບ.

**ໝວດທີ 3**

**ອົງການຄຸ້ມຄອງການມີສ່ວນຮ່ວມຂອງສັງຄົມເຂົ້າໃນວຽກງານການສຶກສາ**

**ມາດຕາ 14 ອົງການຄຸ້ມຄອງການມີສ່ວນຮ່ວມຂອງສັງຄົມເຂົ້າໃນວຽກງານການສຶກສາ**

**ອົງການຄຸ້ມຄອງການມີສ່ວນຮ່ວມຂອງສັງຄົມເຂົ້າໃນວຽກງານການສຶກສາ ປະກອບມີ:**

1. ອົງການຄຸ້ມຄອງການສຶກສາພາຍໃນມີ: ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ໂຮງຮຽນ;

2. ອົງການຄຸ້ມຄອງການສຶກສາພາຍນອກມີ: ຄະນະກຳມະການການຄຸ້ມຄອງການສຶກສາຂັ້ນແຂວງ, ຄະນະກຳມະການຄຸ້ມຄອງການສຶກສາຂັ້ນເມືອງ, ຄະນະກຳມະການຄຸ້ມຄອງການສຶກສາຂັ້ນບ້ານ.

**ມາດຕາ 15** ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງການສຶກສາພາຍໃນ

1. ສິດ ແລະ ໜ້າທີ່ຂອງພະແນກສຶກສາທິການ ແລະ ກິລາແຂວງ:

1.1 ຄົ້ນຄວ້າພິຈາລະນາແຜນພັດທະນາໂຮງຮຽນຕາມການສະເໜີຂອງຫ້ອງການສຶກສາທິການ ແລະ ກິລາເມືອງ ແລ້ວນຳສະເໜີຄະນະກຳມະການຄຸ້ມຄອງການສຶກສາຂັ້ນແຂວງ ພິຈາລະນາອະນຸມັດ;

1.2 ຕິດຕາມ, ກວດກາ, ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດໃນແຕ່ລະໄລຍະໃຫ້ຄະນະກຳມະການຄຸ້ມຄອງການສຶກສາຂັ້ນແຂວງ ຮັບຊາບ.

2. ສິດ ແລະ ໜ້າທີ່ ຂອງຫ້ອງການສຶກສາທິການ ແລະ ກິລາເມືອງ:

2.1 ສັງລວມ ແລະ ຈັດລຽງບຸລິມະສິດແຜນພັດທະນາໂຮງຮຽນ ແລ້ວນຳສະເໜີຕໍ່ພະແນກສຶກສາທິການ ແລະ ກິລາແຂວງ;

2.2 ຕິດຕາມ, ກວດກາ, ສະຫຼຸບລາຍງານຜົນການຈັດຕັ້ງປະຕິບັດໃນແຕ່ລະໄລຍະໃຫ້ພະແນກສຶກສາທິການ ແລະ ກິລາແຂວງ ຮັບຊາບ.

3. ສິດ ແລະ ໜ້າທີ່ຂອງຄະນະອຳນວຍການໂຮງຮຽນ:

3.1ຮ່ວມກັບຄະນະກຳມະການຄຸ້ມຄອງການສຶກສາຂັ້ນບ້ານ ສ້າງ ແລະ ສົ່ງແຜນພັດທະນາໂຮງຮຽນໃຫ້ຄະນະກຳມະການຄຸ້ມຄອງການສຶກສາຂັ້ນເມືອງ;

3.2 ສະຫຼຸບການນຳໃຊ້ເງິນ ແລະ ລາຍງານຜົນຂອງການຈັດຕັ້ງປະຕິບັດແຕ່ລະພາກຮຽນ ແລະ ສົກຮຽນໃຫ້ຫ້ອງການສຶກສາທິການ ແລະ ກິລາເມືອງ ຮັບຊາບ.

**ມາດຕາ 16** ຄະນະກຳມະການຄຸ້ມຄອງການສຶກສາພາຍນອກ

ຄະນະກຳມະການຄຸ້ມຄອງການສຶກສາພາຍນອກມີ 3 ຂັ້ນຄື:

1. ຄະນະກຳມະການຄຸ້ມຄອງການສຶກສາຂັ້ນແຂວງ
2. ຄະນະກຳມະການຄຸ້ມຄອງການສຶກສາຂັ້ນເມືອງ
3. ຄະນະກຳມະການຄຸ້ມຄອງການສຶກສາຂັ້ນບ້ານ

**ມາດຕາ 17** ຄະນະກຳມະການຄຸ້ມຄອງການສຶກສາຂັ້ນແຂວງ ປະກອບມີ:

| | |
|---|---|
| 1. ຮອງເຈົ້າແຂວງ | ເປັນປະທານ |
| 2. ຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ | ເປັນຮອງ |
| 3. ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາແຂວງ | ເປັນຮອງ |
| 4. ຫົວໜ້າຂະແໜງບໍລິຫານ | ເປັນກຳມະການ |
| 5. ຫົວໜ້າຂະແໜງກວດກາ, ປະເມີນຜົນ ແລະ ປະກັນຄຸນນະພາບ | ເປັນກຳມະການ |
| 6. ຫົວໜ້າຂະແໜງສາມັນສຶກສາ | ເປັນກຳມະການ |
| 7. ຫົວໜ້າຂະແໜງສຶກສາກ່ອນໄວຮຽນ | ເປັນກຳມະການ |
| 8. ຫົວໜ້າຂະແໜງສະຖິຕິ-ແຜນການ ແລະ ພົວພັນການຕ່າງປະເທດ | ເປັນກຳມະການ |
| 9. ຫົວໜ້າຂະແໜງການເງິນ | ເປັນກຳມະການ |

**ມາດຕາ 18** ຄະນະກຳມະການຄຸ້ມຄອງການສຶກສາຂັ້ນເມືອງ ປະກອບມີ:

| | |
|---|---|
| 1. ຮອງເຈົ້າເມືອງ | ເປັນປະທານ |
| 2. ຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ | ເປັນຮອງ |
| 3. ຮອງຫົວໜ້າຫ້ອງການສຶກສາທິການ ແລະ ກິລາເມືອງ | ເປັນຮອງ |
| 4. ຫົວໜ້າໜ່ວຍງານບໍລິຫານ | ເປັນກຳມະການ |
| 5. ຫົວໜ້າໜ່ວຍງານກວດກາ, ປະເມີນຜົນ ແລະ ປະກັນຄຸນນະພາບ | ເປັນກຳມະການ |
| 6. ຫົວໜ້າໜ່ວຍງານສຶກສາພາກບັງຄັບ | ເປັນກຳມະການ |
| 7. ຫົວໜ້າໜ່ວຍງານສຶກສາກ່ອນໄວຮຽນ | ເປັນກຳມະການ |
| 8. ຫົວໜ້າໜ່ວຍງານສະຖິຕິ-ແຜນການ ແລະ ພົວພັນການຕ່າງປະເທດ | ເປັນກຳມະການ |

**ມາດຕາ 19** ຄະນະກຳມະການຄຸ້ມຄອງການສຶກສາຂັ້ນບ້ານ ປະກອບມີ:

| | |
|---|---|
| 1. ນາຍບ້ານ | ເປັນປະທານ |
| 2. ຜູ້ອຳນວຍການໂຮງຮຽນ | ເປັນຮອງ |
| 3. ປະທານແນວໂຮມບ້ານ | ເປັນກຳມະການ |
| 4. ຕາງໜ້າ ຄູ | ເປັນກຳມະການ |
| 5. ປະທານສະຫະພັນແມ່ຍິງບ້ານ | ເປັນກຳມະການ |
| 6. ເລຂາຊາວໜຸ່ມບ້ານ | ເປັນກຳມະການ |
| 7. ປະທານສະມາຄົມພໍ່ແມ່ນັກຮຽນ | ເປັນກຳມະການ |

**ມາດຕາ 20** ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງການສຶກສາພາຍນອກ

1. ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງການສຶກສາຂັ້ນແຂວງ:

   1.1 ອຳນວຍຄວາມສະດວກໃນການປຸກລະດົມຂົນຂວາຍແຫຼ່ງທຶນຈາກສັງຄົມ ແລະ ຜູ້ປົກຄອງນັກຮຽນຕາມທີ່ໄດ້ລະບຸໄວ້ໃນມາດຕາ 9 ແລະ ມາດຕາ 10 ຂອງຂໍ້ຕົກລົງສະບັບນີ້.

1.2 ມີໜ້າທີ່ຊີ້ນຳໃນການສ້າງ, ຮັບຮອງ ແລະ ຄົ້ນຄວ້າພິຈາລະນາອະນຸມັດແຜນການພັດທະນາການສຶກສາຮອບດ້ານຈາກຄະນະກຳມະການຄຸ້ມຄອງການສຶກສາຂັ້ນເມືອງ.

1.3 ກວດກາ, ຊຸກຍູ້ ການຈັດຕັ້ງປະຕິບັດແຜນພັດທະນາວຽກງານການສຶກສາທົ່ວແຂວງ.

2. ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງການສຶກສາຂັ້ນເມືອງ:

2.1 ຄົ້ນຄວ້າການສ້າງ, ຮັບຮອງແຜນພັດທະນາການສຶກສາຮອບດ້ານ, ຕິດຕາມການຈັດຕັ້ງປະຕິບັດແຜນອຳນວຍຄວາມສະດວກ ແລະ ຄຸ້ມຄອງໃນການເກັບພັນທະນຳພໍ່ແມ່ຜູ້ປົກຄອງນັກຮຽນຕາມທີ່ໄດ້ລະບຸໄວ້;

2.2 ຄົ້ນຄວ້າຈັດລຽງບຸລິມະສິດແຜນງົບປະມານຕາມການສະເໜີຂອງຄະນະກຳມະການຄຸ້ມຄອງການສຶກສາຂັ້ນບ້ານ ແລ້ວນຳສະເໜີຕໍ່ຄະນະກຳມະການຄຸ້ມຄອງການສຶກສາຂັ້ນແຂວງ ເພື່ອ ພິຈາລະນາອະນຸມັດ;

2.3 ຕິດຕາມ, ຊຸກຍູ້, ກວດກາ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດໃນແຕ່ລະພາກຮຽນ, ສົກຮຽນໃຫ້ຄະນະກຳມະການຄຸ້ມຄອງການສຶກສາຂັ້ນແຂວງຮັບຊາບ.

2.4 ເປີດບັນຊີເງິນຝາກຢູ່ຄັງເງິນຂອງເມືອງ ພ້ອມທັງຄຸ້ມຄອງ ແລະ ນຳໃຊ້ເງິນຕາມແຜນອະນຸມັດ.

3. ສິດ ແລະ ໜ້າທີ່ຂອງຄະນະກຳມະການຄຸ້ມຄອງການສຶກສາຂັ້ນບ້ານ:

3.1 ເຂົ້າຮ່ວມການສ້າງແຜນພັດທະນາໂຮງຮຽນແລ້ວນຳສະເໜີຄະນະກຳມະການຄຸ້ມຄອງການສຶກສາ ຂັ້ນເມືອງ ເພື່ອພິຈາລະນາຮັບຮອງ;

3.2 ເຂົ້າຮ່ວມເກັບພັນທະ ນຳພໍ່ແມ່ຜູ້ປົກຄອງນັກຮຽນຕາມທີ່ໄດ້ລະບຸໄວ້;

3.3 ເຂົ້າຮ່ວມຕິດຕາມກວດກາ, ຄຸ້ມຄອງ ແລະ ການນຳໃຊ້ເງິນຕາມແຜນອະນຸມັດ;

3.4 ເຂົ້າຮ່ວມຈັດຕັ້ງປະຕິບັດ ແລະ ສະຫຼຸບແຜນພັດທະນາໃນແຕ່ລະພາກຮຽນ ແລະ ສົກຮຽນໃຫ້ຄະນະກຳມະການຄຸ້ມຄອງການສຶກສາຂັ້ນເມືອງ ຢ່າງເປັນປົກກະຕິ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 21** ຂໍ້ຫ້າມທົ່ວໄປ

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງຂອງໂຮງຮຽນວາງລະບຽບການກ່ຽວກັບການເກັບເງິນ ນຳສັງຄົມ ແລະ ຜູ້ປົກຄອງນັກຮຽນໂດຍບໍ່ໄດ້ຮັບອະນຸຍາດຈາກພະແນກສຶກສາທິການ ແລະ ກິລາແຂວງ ຢ່າງເດັດຂາດ.

**ມາດຕາ 22** ຂໍ້ຫ້າມສຳລັບບຸກຄະລາກອນການສຶກສາ

ຫ້າມ ພະນັກງານ, ຄູ-ອາຈານ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງມີພຶດຕິກຳ ສວຍໃຊ້ໜ້າທີ່ຕຳແໜ່ງ, ປອມແປງເອກະສານ, ຮັບສິນບົນ ແລະ ນຳໃຊ້ເງິນດັ່ງກ່າວບໍ່ຖືກເປົ້າໝາຍທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ຫຼື ບໍ່ໄດ້ຮັບອະນຸຍາດຈາກຄະນະກຳມະການຄຸ້ມຄອງການສຶກສາຂັ້ນແຂວງ.

**ມາດຕາ 23** ຂໍ້ຫ້າມສຳລັບອຳນາດການປົກຄອງ

1. ຫ້າມສວຍໃຊ້ໜ້າທີ່ຕຳແໜ່ງ, ຮ່ວມມືກັບບຸກຄະລາກອນການສຶກສາ ແລະ ບຸກຄົນທີ່ກ່ຽວຂ້ອງ ປອມແປງເອກະສານ, ຮັບສິນບົນ ແລະ ນຳໃຊ້ເງິນດັ່ງກ່າວບໍ່ຖືກເປົ້າໝາຍທີ່ໄດ້ລະບຸໄວ້;
2. ຫ້າມໃຊ້ສິດອຳນາດບັງຄັບ ຄອບຄົວ, ສັງຄົມ, ບຸກຄົນ, ນິຕິບຸກຄົນ ແລະ ທຸກພາກສ່ວນຂອງສັງຄົມ.

## ໝວດທີ 5
## ອີງການກວດກາ ການມີສ່ວນຮ່ວມຂອງສັງຄົມເຂົ້າໃນວຽກງານການສຶກສາ

**ມາດຕາ 24** ອົງການກວດກາການມີສ່ວນຮ່ວມຂອງສັງຄົມເຂົ້າໃນວຽກງານການສຶກສາ

ອົງການກວດກາ ການມີສ່ວນຮ່ວມຂອງສັງຄົມເຂົ້າໃນວຽກງານການສຶກສາ ມີດັ່ງນີ້:

1. ອົງການກວດກາພາຍໃນ: ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ໂຮງຮຽນ.

2. ອົງການກວດກາພາຍນອກ: ສະພາປະຊາຊົນແຂວງ, ອົງການກວດສອບປະຈຳພາກກາງ, ພະແນກກວດກາລັດແຂວງ, ຫ້ອງການກວດກາລັດເມືອງ, ແນວລາວສ້າງຊາດ ແລະ ຄະນະກຳມະການຄຸ້ມຄອງການສຶກສາແຕ່ລະຂັ້ນ.

**ມາດຕາ 25** ເນື້ອໃນການກວດກາ

1. ກວດກາການຈັດຕັ້ງປະຕິບັດແຜນພັດທະນາການສຶກສາ, ການຄຸ້ມຄອງນຳໃຊ້ ງົບປະມານ, ວັດຖຸ, ອຸປະກອນຕ່າງໆ ທີ່ໄດ້ຈາກການປະກອບສ່ວນ;

2. ກວດກາແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງກ່ຽວກັບການຄຸ້ມຄອງການມີສ່ວນຮ່ວມຂອງສັງຄົມໃຫ້ຖືກຕ້ອງ ແລະ ເປັນທຳ.

**ມາດຕາ 26** ຮູບການກວດກາ

ຮູບການກວດກາການມີສ່ວນຮ່ວມຂອງສັງຄົມໃນວຽກງານການສຶກສາ ມີ:

1. ການກວດກາປົກກະຕິ ແມ່ນການກວດກາທີ່ໄດ້ດຳເນີນໄປຕາມແຜນການ, ແຜນງານ ແລະ ມີການກຳນົດເວລາອັນແນ່ນອນ.

2. ການກວດກາໂດຍມີການແຈ້ງລ່ວງໜ້າ ແມ່ນການກວດການອກແຜນການເມື່ອເຫັນວ່າມີຄວາມຈຳເປັນ ໂດຍແຈ້ງໃຫ້ຜູ້ກວດກາຊາບລ່ວງໜ້າ.

3. ການກວດກາແບບກະທັນຫັນ ແມ່ນການກວດການອກແຜນ, ມີຄວາມຈຳເປັນຮີບດ່ວນໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຊາບລ່ວງໜ້າ.

## ໝວດທີ 6
## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 27** ນະໂຍບາຍຕໍ່ຜູ້ທີ່ມີຜົນງານ

ຄອບຄົວ, ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ແລະ ທຸກພາກສ່ວນຂອງສັງຄົມ ທີ່ມີຜົນງານດີເດັ່ນໃນການປະກອບສ່ວນໃນວຽກງານການສຶກສາ ຈະໄດ້ຮັບການຍ້ອງຍໍ, ຊົມເຊີຍ ແລະ ນະໂຍບາຍອື່ນໆຕາມຄວາມ ເໝາະສົມ.

**ມາດຕາ 28** ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້ ເຊິ່ງບໍ່ເປັນການກະທຳຜິດທາງອາຍາຈະຖືກສຶກສາອົບຮົມ, ປະຕິບັດວິໄນ, ດຳເນີນຄະດີຕາມກົດໝາຍແລ້ວແຕ່ກໍລະນີເບົາ ຫຼື ໜັກ.

**ມາດຕາ 29** ມາດຕະການສຶກສາອົບຮົມ

ບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງທີ່ລະເມີດຂໍ້ຕົກລົງສະບັບນີ້ ເຊິ່ງບໍ່ເປັນການກະທຳຜິດທາງອາຍາຈະຖືກກ່າວເຕືອນ ແລະ ສຶກສາອົບຮົມ ໂດຍບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດຂອງຜູ້ກ່ຽວ.

**ມາດຕາ 30** ມາດຕະການທາງວິໄນ

ໃນກໍລະນີສຶກສາອົບຮົມແລ້ວຍັງສືບຕໍ່ລະເມີດ ຈະໄດ້ປະຕິບັດວິໄນຍົກຍ້າຍ, ປົດຕຳແໜ່ງ, ໃຊ້ແທນຄ່າເສຍຫາຍ.

**ມາດຕາ 31** ມາດຕະການດຳເນີນຄະດີຕາມກົດໝາຍ

ໃນກໍລະນີມີການລະເມີດຮ້າຍແຮງເຂົ້າຄ່າຍສໍ້ໂກງ, ຍັກຍອກ, ປຸກລະດົມດ້ວຍຮູບການວາງແຜນສ້າງຄວາມເສຍຫາຍຫຼາຍ ເຊິ່ງເປັນການກຳນົດໄວ້ໃນກົດໝາຍເປັນການກະທຳຜິດທາງອາຍາ ຕ້ອງດຳເນີນຄະດີຕາມກົດໝາຍ.

ໝວດທີ 7

ບົດບັນຍັດສຸດທ້າຍ

**ມາດຕາ 32** ການຈັດຕັ້ງປະຕິບັດ

ມອບໃຫ້ພະແນກສຶກສາທິການ ແລະ ກິລາແຂວງ, ຫ້ອງການສຶກສາທິການ ແລະ ກິລາເມືອງ ແລະ ໂຮງຮຽນ ເປັນເຈົ້າການປະສານສົມທົບກັບຄະນະກຳມະການຄຸ້ມຄອງການສຶກສາຂັ້ນແຂວງ, ຂັ້ນເມືອງ, ຂັ້ນບ້ານ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ. ການຈັດຕັ້ງປະຕິບັດໃຫ້ເພີ່ມທະວີການຄຸ້ມຄອງ, ຕິດຕາມ, ກວດກາ, ສະຫຼຸບລາຍງານ, ຖອດຖອນບົດຮຽນເປັນປົກກະຕິໃນກອງປະຊຸມຜູ້ບໍລິຫານການສຶກສາ ແລະ ກິລາແຕ່ລະຂັ້ນ.

**ມາດຕາ 33** ຜົນສັກສິດ

ຂໍ້ຕົກລົງສະບັບນີ້ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ເຈົ້າແຂວງບໍລິຄຳໄຊ**

ປອ. ກອງແກ້ວ ໄຊສົງຄາມ